**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.orgg**



# ວິທີການຝຶກອົບຮົມ_ສົ່ງເສີມຊາວ ກະສິກອນທີ່ມີປະສິດຕິພາບ



**ເອກະສານ ປະກອບການຝຶກອົບຮົມ 06:**

CETDU
Central Extension
Training and
Development Unit

ປື້ມຄູ່ມືໃນການສົ່ງເສີມກະສິກຳແມ່ນຫົວຂໍ້ຕໍ່ເນື່ອງຊຶ່ງລວມມີ:

- ວິທີການສົ່ງເສີມ (ພາກ 1 ຫາ 19)
- ເຄື່ອງມື ສຳລັບວິທີການສົ່ງເສີມກະສິກຳ ແລະປ່າໄມ້
- ປື້ມຄູ່ມື ກ່ຽວກັບເຕັກນິກ ກະສິກຳ ລ້ຽງສັດ ປູກຝັງຫລັກສູດ (ພະນັກງານສົ່ງເສີມ ຂັ້ນເມືອງ ແລະພະນັກງານສົ່ງເສີມຂັ້ນບ້ານ)

ປື້ມຄູ່ມືດັ່ງກ່າວແມ່ນເຈດຕະນາເຮັດໃຫ້ການນຳໃຊ້ງ່າຍຂຶ້ນໃນການຈັດຕັ້ງປະຕິບັດ ແລະ ນຳສະເຫນີຈຸດປະສົງຂໍ້ມູນເບື້ອງຕົ້ນຂອງວິທີການສົ່ງເສີມກິສິກຳ. ປື້ມຄູ່ມືດັ່ງກ່າວໄດ້ຖືກພັດທະນາໃນບາດກ້າວທຳອິດຂອງໂຄງການ Leap ໂດຍການ ຮ່ວມມືກັບພະນັກງານຄູຝຶກຂອງກອງສົ່ງເສີມກະສິກຳ ແລະ ປ່າໄມ້ (ໂດຍແມ່ນ ພະນັກງານວິຊາການ CETDU)
ຄວາມມຸ້ງຫມາຍແມ່ນເພື່ອພັດທະນາເປັນເຄື່ອງມືໃຫ້ພະນັກງານ ສົ່ງເສີມຂັ້ນເມືອງສາມາດຖ່າຍທອດໄປເຖິງຄວາມຕ້ອງການຂອງຊາວກະສິກອນ.

**Laos Extension for Agriculture Project**
**P.O. Box 9159**
**Vientiane, Lao P.D.R.**
**Tel/fax: 021 732 162 Mobile: 020 5526277**
**Email: leap@laoex.org**
**Email: cetdu@laoex.org**

## ປື້ມຄູ່ມືໃນແຕ່ລະເລື້ອງ

**I. <u>ເອກະສານປະກອບການຝຶກອົບຮົມຄັ້ງທີ 1</u>**

1. ລະບົບ ແລະຂະບວນການຝຶກ _ ສົ່ງເສີມວຽກງານກະສິກຳ ແລະປ່າໄມ້
2. ວິທີການປະເມີນຄວາມຕ້ອງການຝຶກ_ສົ່ງເສີມ ຊາວກະສິກອນ (TNA _ Kiss)
3. ເຕັກນິກການພົວພັນ_ສື່ສານທີ່ມີປະສິດທິພາບ
4. ວິທີການເຮັດວຽກກັບຊາວກະສິກອນ
5. ຄູ່ມືພາກສະໜາມ ສຳລັບນັກສົ່ງເສີມ

**II. <u>ເອກະສານປະກອບການຝຶກອົບຮົມຄັ້ງທີ 2</u>**

6. ວິທີການຝຶກອົບຮົມ_ສົ່ງເສີມຊາວກະສິກອນທີ່ມີປະສິດທິພາບ
7. ບາງເຕັກນິກການຝຶກອົບຮົມແບບມີສ່ວນຮ່ວມ
8. ການຝຶກອົບຮົມແບບມີສ່ວນຮ່ວມ
9. ເຕັກນິກພື້ນຖານສຳລັບວິທະຍາກອນ
10. ການພັດທະນາກຸ່ມຜູ້ຜະລິດ
11. ການຄຸ້ມຄອງບໍລິຫານກຸ່ມທີ່ມີປະສິດທິພາບ
12. ການພັດທະນາຜູ້ນຳຊຸມຊົນ ແລະວິຊາການບ້ານ
13. ການຕິດຕາມຊຸກຍູ້ຂະບວນການຝຶກ_ສົ່ງເສີມຊາວກະສິກອນ
14. ວິທີການ, ເຄື່ອງມືການວາງແຜນ ແລະປະຕິບັດແຜນການ

**III. <u>ເອກະສານປະກອບການຝຶກອົບຮົມຄັ້ງທີ 3</u>**

15. ພື້ນຖານການພັດທະນາ ແລະວິທີການຝຶກສົ່ງເສີມ ແບບມີສ່ວນຮ່ວມ
16. ວິໃສທັດໃນການປັບປຸງວຽກງານການສົ່ງເສີມ ກະສິກຳ
17. ປັດໃຈມະນຸດ ແລະການພັດທະນາ ວຽກງານ ສົ່ງເສີມ ກປ
18. ການຈັດທັດສະນະສຶກສາ
19. ລະບົບ ພໍ່ປົກຄອງລູກ ຄວາມກະຕືລືລົ້ນ ແລະການມີສ່ວນຮ່ວມ



# ເອກະສານ 06: ວິທີການ⁄ ຝຶກອົບຮົມ_ສົ່ງເສີມຊາວກະສິກອນທີ່ມີປະສິດຕິພາບ

## ສາລະບານ


ບົດນຳ ........................................ 2

ລັກສະນະທີ່ດີຂອງຄູຝຶກ ........................................ 4

ຂະບວນການຝຶກອົບຮົມຊາວກະສິກອນທີ່ຕ້ອງປະຕິບັດ ........................................ 7

ເຕັກນິກພື້ນຖານສຳຄັນສຳລັບການຄວບຄຸມຫ້ອງຝຶກ ........................................ 11

ການຈັດການສະຖານທີ່ຝຶກອົບຮົມ ........................................ 11

ການຄວບຄຸມບັນຍາກາດ ........................................ 12

ການຄວບຄຸມເວລາ ........................................ 14

ການຄວບຄຸມເນື້ອໃນການຝຶກ ........................................ 14

ການຈັດການບໍລິຫານຝຶກ ........................................ 16

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້

ພະແນກ ສົ່ງເສີມ ແລະ ຄຸ້ມຄອງໂຄງການ

ໜ່ວຍງານ ພັດທະນາຮູບແບບ ແລະ ຝຶກອົບຮົມ, ເມສາ 2003

- ກຳນົດໜ້າທີ່ລະອຽດໃຫ້ແຕ່ລະຄົນໃນທີມງານວ່າຈະເຮັດສິ່ງໃດເວລາໃດໃນໄລຍະຝຶກຕົວຈິງ, ພ້ອມທັງມອບໜ້າທີ່ຕ່າງໆທີ່ກ່ຽວຂ້ອງກັບສຳມະນາກອນເອງຕ້ອງໄດ້ປະຕິບັດດ້ວຍ
- ຈັດແຈງສະຖານທີ່ພັກເຊົາຢູ່ກິນຂອງສຳມະນາກອນ ແລະແຂກຖືກເຊີນຕ່າງໆ
- ວາງລະບຽບການໃນການຢູ່ກິນພັກເຊົາຮ່ວມກັບສຳມະນາກອນ ໂດຍມີຜູ້ຕິດຕາມດູແລລະອຽດປະຈຳອີກດ້ວຍ
- ຈັດແຈງການເດີນທາງໄປມາຂອງສຳມະນາກອນ ແລະທີມງານ
- ຄຸ້ມຄອງວັດຖຸອຸປະກອນ ແລະງົບປະມານການຝຶກໃຫ້ມີປະສິດຕິພາບສູງສຸດ
- ເກັບກຳບັນຫາຕ່າງໆທີ່ກ່ຽວຂ້ອງຕະລອດເວລາເພື່ອເປັນບົດຮຽນໃນຕໍ່ໜ້າ
- ບັນທຶກລາຍງານການຝຶກໃຫ້ຜູ້ທີ່ກ່ຽວຂ້ອງຮັບຮູ້ນຳ

ທັງໝົດທີ່ກ່າວມານັ້ນເປັນພຽງແຕ່ຂໍ້ແນະນຳໃນໜ້າເຈ້ຍເພື່ອໃຫ້ຜູ້ທີ່ສົນໃຈໄດ້ອ່ານ ແລະເກີດແນວຄວາມຄິດໃນທາງປະຕິບັດ ແຕ່ຜົນຈະເກີດຢ່າງເປັນຮູບປະທຳຂຶ້ນໄດ້ນັ້ນ ຢູ່ທີ່ຄູຝຶກເອງຕ້ອງໄດ້ຝຶກຝົນປະຕິບັດຢ່າງຈິງຈັງ, ດ້ວຍໃຈມັກ ແລະຮັບຜິດຊອບແທ້ໆ, ຄວາມຮູ້ເລົ່ານີ້ຈຶ່ງຈະເກີດປະໂຫຍດໃຫ້ແກ່ຕົນ ແລະຊາວກະສິກອນຜູ້ທີ່ຍັງຄອງຄອຍການຊ່ວຍເຫຼືອຈາກພວກເຮົານັບຮ້ອຍນັບພັນ.

“ວຽກເກີດຂຶ້ນໄດ້ຢູ່ທີ່ການຊອກສະແຫວງຫາ, ຜົນສຳເລັດຈະເກີດມີຂຶ້ນມາຢູ່ທີ່ການໄດ້ເລີ່ມລົງມືປະຕິບັດ”.



# ວິທີການ⁄
# ຝຶກອົບຮົມ_ສົ່ງເສີມຊາວກະສິກອນທີ່ມີປະສິດຕິພາບ

## ບົດນຳ

ການຝຶກອົບຮົມແມ່ນເປັນຂະບວນການທີ່ຕໍ່ເນື່ອງ, ມີເປົ້າໝາຍສຳຄັນແນໃສ່ເຮັດໃຫ້ຜູ້ທີ່ໄດ້ຮັບການຝຶກເກີດການປ່ຽນແປງພຶດຕິກຳໃນການປະຕິບັດໜ້າທີ່ຂອງຕົນເພື່ອໃຫ້ເກີດປະໂຫຍດແກ່ຕົນເອງແລະສັງຄົມໂດຍລວມ. ຕໍ່ການຝຶກອົບຮົມໂດຍສ່ວນໃຫຍ່ມັກເຂົ້າໃຈກັນວ່າເປັນການທີ່ກຸ່ມຄົນຈຳນວນນຶ່ງໄດ້ເຂົ້າໄປຮ່ວມໃນຫ້ອງຝຶກ ນັ່ງຟັງວິທະຍາກອນໃຫ້ຂໍ້ມູນອະທິບາຍເປັນເລື່ອງໆຕິດຕໍ່ກັນໄປແລ້ວ ໃນຊ່ວງທ້າຍອາດມີການມອບໃບຢັ້ງຢືນໃດນຶ່ງໃຫ້ແກ່ຜູ້ເຂົ້າຮັບຝຶກ. ແຕ່ສິ່ງເລົ່ານັ້ນເປັນພຽງແຕ່ເປືອກນອກຂອງຮູບການຫາກບໍ່ໄດ້ແມ່ນເນື້ອແທ້ຂອງການຝຶກອົບຮົມ.

ໃນຄວາມເປັນຈິງການຝຶກອົບຮົມເກີດຂຶ້ນໄດ້ທຸກເວລາ, ອາດມີວິທະຍາກອນຫຼືບໍ່ມີກໍ່ໄດ້ ສຳຄັນຢູ່ທີ່ຜູ້ຊອກສະແຫວງຫາຄວາມຮູ້ໄດ້ມີຂໍ້ມູນທີ່ເປັນປະໂຫຍດຕໍ່ການປະຕິບັດໜ້າທີ່ເພີ່ມເຕີມ ແລະຂໍ້ມູນນັ້ນໄດ້ເຮັດໃຫ້ເກີດຄວາມເຂົ້າໃຈກະຈ່າງແຈ້ງຕໍ່ໜ້າວຽກພ້ອມທັງຮູ້ກຳນົດວິທີການນຳໄປໃຊ້ໃຫ້ເກີດປະໂຫຍດໃນຊີວິດປະຈຳວັນ, ເຫັນໄດ້ຄວາມເສຍຫາຍ ແລະປະໂຫຍດຈາກໜ້າວຽກເລົ່ານັ້ນຕໍ່ຕົນເອງ ແລະ ອົງການຈັດຕັ້ງນັ້ນຄື ການຝຶກອົບຮົມທີ່ແທ້ຈິງ.

ການຝຶກອົບຮົມຖືໄດ້ວ່າເປັນການສຶກສານອກລະບົບ ແລະກ່ຽວຂ້ອງກັບການສຶກສາຜູ້ໃຫ່ຍເປັນສຳຄັນມີ ຊ່ວງໄລຍະເວລາຈຳກັດແຕ່ຕ້ອງມີການຮຽນຮູ້ ແລະ ມີພຶດຕິກຳປ່ຽນແປງດີຂື້ນກ່ວາເດີມ.

ພຶດຕິກຳຄືການສະແດງອອກຂອງຄົນອາດດ້ວຍການອະທິບາຍເຖິງຄວາມໝາຍ/ຄວາມສຳຄັນ, ຂັ້ນຕອນການປະຕິບັດສິ່ງໃດສິ່ງນຶ່ງທີ່ຕົນຮັບຮູ້, ຫຼືອາດດ້ວຍການປະຕິບັດຕົວຈິງໃນຊີວິດປະຈຳວັນ ແລະໃນການປະຕິບັດໜ້າທີ່ການງານຕ່າງໆ.

ການປ່ຽນແປງພຶດຕິກຳເກີດຂື້ນໄດ້ນັ້ນແມ່ນຍ້ອນຄົນໆ ນັ້ນໄດ້ມີທັດສະນະ, ຄວາມຮູ້, ຄວາມສາມາດອັນໃໝ່ທີ່ດີເກີດຂື້ນ. ເມື່ອຄວາມຮູ້ ແລະຄວາມສາມາດເລົ່ານັ້ນໄດ້ຖືກນຳເອົາໄປຈັດຕັ້ງປະຕິບັດເຂົ້າໃນວຽກງານຕົວຈິງເຮັດໃຫ້ເກີດມີຜົນຂອງວຽກດີຂື້ນໂດຍຜູ້ນຳປະຕິບັດນັ້ນສາມາດຖອດຖອນໄດ້ບົດຮຽນອັນດີ, ອັນອ່ອນ ແລະມີແນວວິທີປັບປຸງແກ້ໄຂຢ່າງຕໍ່ເນື່ອງນັ້ນຄືການຮຽນຮູ້ທີ່ແທ້ຈິງຈາກການຝຶກອົບຮົມ. ເພາະສະນັ້ນຖ້າຢາກໃຫ້ຜູ້ຮັບການຝຶກອົບຮົມຮຽນຮູ້ໄດ້ຢ່າງມີປະສິດຕິພາບມີຄວາມຈຳເປັນຕ້ອງໄດ້ມີຜູ້ກະຕຸ້ນ ແລະອຳນວຍຄວບຄຸມໃຫ້ເກີດການຮຽນຮູ້ກ່າວຄືຕ້ອງມີ **ນັກຝຶກ/ ນັກສົ່ງເສີມທີ່ມີຄວາມສາມາດແທ້ໆ.**





- ມີວິທີການຟັງທີ່ດີ
- ມີວິທີການຖາມທີ່ດີ
- ມີວິທີການສັງເກດທີ່ດີ
- ມີວິທີການຂຽນ/ ບັນທຶກທີ່ດີ
- ມີວິທີການເວົ້າທີ່ດີ
- ມີວິທີການໃຊ້ກິລິຍາທ່າທາງທີ່ດີ

ກິລິຍາບົດທີ່ກ່າວມານັ້ນບໍ່ໄດ້ມີສູດຕຳລາຕາຍຕົວ, ສ່ວນໃຫຍ່ຂື້ນກັບບຸກຄະລິກ ແລະລັກສະນະຂອງຄູຝຶກແຕ່ລະຄົນທີ່ຈະດຶງເອົາທ່າແຮງຂອງຕົນອອກມາໄຊ້ໃຫ້ເກີດປະໂຫຍດ, ທັງເປັນການຝຶກຝົນຕົນເອງໄປພ້ອມຕະຫຼອດເວລາທັງນັ້ນກໍ່ເພື່ອເຮັດໃຫ້ເນື້ອໃນທີ່ສຳຄັນຕົ້ນຕໍໄດ້ຖືກສົ່ງມອບໃຫ້ແກ່ສຳມະນາກອນຢ່າງຄົບຖ້ວນ ແລະເປັນທີ່ເຂົ້າໃຈກະຈ່າງແຈ້ງຂອງໝົດທຸກຄົນ.

## 2.5. ການຈັດການບໍລິຫານການຝຶກ

ການຝຶກອົບຮົມທຸກຄັ້ງຈະເກີດມີຜົນຮັບທີ່ດີກໍ່ຕໍ່ເມື່ອທີມຄູຝຶກມີຄວາມສາມາດໃນການຈັດການບໍລິຫານລວມທີ່ດີກ່າວຄືເມື່ອມີການວາງແຜນກຳນົດຫຼັກສູດ, ແລ້ວທີມຄູຝຶກຕ້ອງໄດ້ມີການແບ່ງງານກັນຈັດຕັ້ງປະຕິບັດອັນປະກອບມີ :

- ຕິດຕໍ່ປະສານງານກັບທຸກຝ່າຍທີ່ກ່ຽວຂ້ອງເພື່ອໃຫ້ເກີດການຈັດຕັ້ງປະຕິບັດການຝຶກອົບຮົມໄດ້ຕາມແຜນວາງໄວ້

ການຕົວຈິງໃນວຽກນີ້ໆ ຂອງແຕ່ລະຄົນ. ດັ່ງນັ້ນ, ຄູຝຶກຕ້ອງມີວິທີການຄວບຄຸມເນື້ອໃນໃຫ້ໄດ້ເປັນຢ່າງດີຈຶ່ງຈະເຮັດໃຫ້ການຮຽນຮູ້ຂອງສຳມະນາກອນມີຜົນຮັບທີ່ດີ.

ຂອບເຂດເນື້ອໃນຂອງແຕ່ລະຫົວຂໍ້ຝຶກທີ່ປະກອບເຂົ້າໃນການຝຶກກໍ່ປະກອບມີ 3 ປະເພດຂໍ້ມູນຄື (1) **ສິ່ງທີ່ຕ້ອງໃຫ້ຮູ້ Must know**, (2) **ສິ່ງທີ່ຄວນໃຫ້ຮູ້ should know**, (3) **ສິ່ງທີ່ໜ້າຈະຮູ້ Nice to know ດັ່ງທີ່ໄດ້ກ່າວໄວ້ຂ້າງເທິງ.**

ເມື່ອເປັນເຊັ່ນນີ້ຄູຝຶກຕ້ອງກຳໄດ້ວ່າເນື້ອໃນຕົ້ນຕໍທີ່ສຳມະນາກອນຕ້ອງຮູ້ຄືຫຍັງ, ຕ້ອງໄຊ້ເຕັກນິກການຝຶກ, ສື່ປະກອບການຝຶກທີ່ກ່ຽວຂ້ອງກັບເນື້ອໃນເລົ່ານັ້ນໃຫ້ເໝາະສົມ, ໄຊ້ເວລາກັບເນື້ອໃນດັ່ງກ່າວໃຫ້ພຽງພໍ. ສ່ວນສິ່ງທີ່ຄວນໃຫ້ຮູ້ກໍ່ໃຫ້ຄວາມສຳຄັນຖັດລົງມາ. ຖ້າເຫັນວ່າເວລາຍັງມີກໍ່ສາມາດນຳສະເໜີສິ່ງທີ່ສຳມະນາກອນໜ້າຈະຮູ້ເພື່ອເປັນຂໍ້ມູນເພີ່ມເຕີມ.

ເພື່ອເຮັດໃຫ້ການຮຽນຮູ້ຂອງສຳມະນາກອນຕໍ່ເນື້ອໃນຕົ້ນຕໍດັ່ງທີ່ກ່າວມານັ້ນໄດ້ດີ, ຄູຝຶກຕ້ອງຄຳນຶງເຖິງການນຳໄຊ້ເຕັກນິກ, ການນຳໄຊ້ສື່ / ອຸປະກອນການຝຶກທີ່ເໝາະສົມກັບສະພາບສຳມະນາກອນ, ກັບຄວາມສຳນິສຳນານຂອງຄູຝຶກເອງດ້ວຍ( ເບິ່ງລາຍລະອຽດໃນເອກະສານແຈກ 'ເຕັກນິກການຝຶກອົບຮົມແບບມີສ່ວນຮ່ວມ" ແລະ "ເຕັກນິກພື້ນຖານສຳລັບວິທະຍາກອນ" ຕື່ມອີກ). ນອກນັ້ນບັນດາພຶດຕິກຳຕ່າງໆທີ່ຕ້ອງໄດ້ສະແດງອອກໃນໜ້າຊັ້ນຝຶກກໍ່ຕ້ອງກຳໃຫ້ໄດ້ຢ່າງໜັກແໜ້ນເຊັ່ນ: ຄູຝຶກຕ້ອງ



## 1. ລັກສະນະທີ່ດີຂອງຄູຝຶກ

ນັກຝຶກອົບຮົມ ຫຼື ຄູຝຶກທີ່ດີຄວນມີລັກສະນະດັ່ງລຸ່ມນີ້:

- ເປັນຜູ້ທີ່ຍອມຮັບການປ່ຽນແປງ
- ມີຄວາມສຸພາບຮຽບຮ້ອຍ
- ເປັນຜູ້ທີ່ເຕັມໃຈໃຫ້ຄວາມຊ່ວຍເຫຼືອ
- ເປັນຜູ້ທີ່ເພິ່ງພາໄດ້ໃນສາຍຕາຂອງສຳມະນາກອນ
- ມີຄວາມຍືດຍຸ່ນໄດ້
- ຈັບຄວາມຮູ້ສຶກຂອງກຸ່ມໄດ້ດີ
- ມີຄວາມຮູ້ໃນເລື້ອງຂະບວນການກຸ່ມດີ
- ເຂົ້າໃຈຂະບວນການຝຶກອົບຮົມດີ
- ມີຄວາມຮູ້ໃນການຖ່າຍທອດບົດຮຽນດີ

ນອກຈາກມີຄຸນລັກສະນະນັກຝຶກອົບຮົມທີ່ດີແລ້ວຕ້ອງກຳໄດ້ສະຖານະການ ແລະ ມີເຕັກນິກການຝຶກເຊັ່ນ: ສະຖານະການທີ່ຄວນກຳໄດ້ມີ:

- ຮູ້ວ່າເປັນຫຍັງຈຶ່ງຕ້ອງຝຶກ (ສຳມະນາກອນຕ້ອງການຮູ້ສິ່ງໃດເພີ່ມເຕີມ)
- ຈະຝຶກເລື້ອງຫຍັງ (ສິ່ງທີ່ນຳເຂົ້າຝຶກສອດຄ່ອງກັບຄວາມຕ້ອງການຫຼືບໍ່)
- ຝຶກໃຫ້ໃຜ (ຜູ້ເຂົ້າຮັບການຝຶກມີພື້ນຖານຄວາມຮູ້ແລະທັດສະນະຢ່າງໃດ)
- ຢູ່ໃນສະຖານທີ່ແບບໃດ( ສະຖານທີ່ຝຶກມີສະພາບຢ່າງໃດ, ຕ້ອງປັບປ່ຽນຢ່າງໃດ)
- ຈະຝຶກວິທີໃດ (ຈະຝຶກແບບໃດ,ດ້ວຍວິທີການອັນໃດຜູ້ເຂົ້າຮັບຝຶກຈຶ່ງຈະຮຽນຮູ້ໄດ້ດີ).

ຢ່າງໃດກໍດີຈຸດເລີ່ມຕົ້ນການຮຽນຮູ້ຂອງຊາວກະສິກອນເພື່ອກ້າວໄປສູ່ການປ່ຽນແປງພຶດຕິກຳໃນການຜະລິດ ແລະຄຸ້ມຄອງນຳໃຊ້ລະບົບຊັບພະຍາກອນໃຫ້ມີປະສິດຕິພາບຂື້ນໄປເລື້ອຍໆ ນັ້ນມັນກ່ຽວພັນຢ່າງສະໜິດແໜ້ນກັບກະໂຕຄູຝຶກ ຫຼື ພະນັກງານສົ່ງເສີມທີ່ມີໜ້າທີ່ໃຫ້ການຝຶກການຕິດຕາມຊຸກຍູ້ຊາວກະສິກອນໂດຍເລີ່ມຈາກການມີຫຼັກສູດການຝຶກທີ່ດີ. ຫຼັກສູດການຝຶກທີ່ດີແມ່ນແນວໃດ?_ຂຽນໄດ້ງາມຈະແຈ້ງ, ມີພາບປະກອບ?, ມີລວດລາຍໃນການຂຽນທີ່ໃຊ້ລະບົບຄອມພິວເຕີຊ່ວຍ? ຫຼືເປັນຫຼັກສູດທີ່ສັ້ນ / ຍາວມີສີສັນດີ?. ທັງໝົດທີ່ກ່າວນັ້ນບໍ່ໄດ້ແມ່ນມາດຖານວັດແທກວ່າຫຼັກສູດການຝຶກຊາວກະສິກອນດີ. ຫຼັກສູດການຝຶກທີ່ດີຕ້ອງເກີດຂື້ນບົນພື້ນຖານຄວາມຕ້ອງການ ແລະຄວາມສົນໃຈຢາກຮຽນຮູ້ຂອງຊາວກະສິກອນກຸ່ມເປົ້າໝາຍ; ມີຈຸດປະສົງຄາດໝາຍກະທັດລັດເຈາະຈົງບັນລຸ ແລະວັດແທກໄດ້; ມີກຳນົດເວລາທີ່ຊັດເຈນ. ສ່ວນເນື້ອໃນໃຈຄວາມຂອງບົດຝຶກກໍ່ຕ້ອງສອດຄ່ອງກ່ຽວຂ້ອງກັບຈຸດປະສົງທີ່ວາງໄວ້. ປົກກະຕິເນື້ອໃນຂອງການຝຶກຈະແຍກອອກໄດ້ເປັນ 3 ປະເພດຄື :

- ສິ່ງຕ້ອງໃຫ້ຮູ້ (Must know)
- ສິ່ງຄວນຮູ້ ແລະ (Should know)
- ສິ່ງທີ່ໜ້າຈະຮູ້ (Nice to know)

ດັ່ງນັ້ນ, ການປະກອບເນື້ອໃນເຂົ້າບົດຝຶກຕົວຈິງໃນໜ້າຫ້ອງຝຶກຕ້ອງໄດ້ເນັ້ນໃສ່ເນື້ອໃນທີ່ເປັນສິ່ງຕ້ອງຮູ້ເປັນສຳຄັນ. ອີກຢ່າງນຶ່ງເພື່ອເຮັດໃຫ້ການຖ່າຍທອດເຕັກນິກວິທີການຕ່າງໆ ໄປສູ່ຊາວກະສິກອນໄດ້ເກີດການຮຽນຮູ້ສາມາດນຳໄປປະຕິບັດໄດ້ຢ່າງມີຄວາມໝັ້ນໃຈນັ້ນ, ນັກຝຶກອົບ



## 2.3. ການຄວບຄຸມເວລາ

ຄູຝຶກຕ້ອງສັງເກດເວລາເປັນໄລຍະໆ ເພື່ອຫຼີກເວັ້ນຄວາມຮູ້ສຶກອຶດອັດ, ລຳຄານໃນທີ່ສຸດເສັຍສັດທາການສັງເກດເວລາມີຢູ່ຄື:

- ເວລາສຳມະນາກອນເຂົ້າຫ້ອງຝຶກມີການຂາດເຄື່ອນ ຫຼືບໍ່ ທຽບໃສແຜນວາງໄວ້ຈະປັບປ່ຽນຢ່າງໃດ ຖ້າມີການຂາດເຄື່ອນ
- ສັງເກດການໃຊ້ເວລາຂອງສຳມະນາກອນໃນການຕອບ ຫຼືສົນທະນາບັນຫານຶ່ງໆ ສັ້ນຍາວພຽງໃດຈຶ່ງໄດ້ຂໍ້ສະຫຼຸບ, ເວລາຈະມີພຽງພໍ ຫຼືບໍ່ສຳລັບທັງໝົດຫົວຂໍ້ຝຶກຊຶ່ງຄູຝຶກຕ້ອງມີການຄວບຄຸມ
- ສັງເກດເວລາພັກຜ່ອນ ແລະເລີກຍັງນ້ອຍຫຼາຍພຽງໃດ, ອາດມີການເຕືອນກັນໃນທີມຄູຝຶກ

## 2.4. ການຄວບຄຸມເນື້ອໃນການຝຶກ

ການຝຶກອົບຮົມທີ່ດີເຖີງຈະມີການວາງແຜນຝຶກແລ້ວກໍ່ຕາມ ແຕ່ຄູຝຶກໃນເວລາຂື້ນຫ້ອງຝຶກຈະຕ້ອງກຳໄດ້ວ່າຕົນເອງຈະນຳເອົາສິ່ງໃດໄປໃຫ້ສຳມະນາກອນຮັບຮູ້ ແລະເຂົ້າໃຈ. ໂດຍສ່ວນໃຫຍ່ຄູຝຶກຫຼືນັກຝຶກອົບຮົມມັກຄິດວ່າຫົວຂໍ້ໃດທີ່ຕົນເຄີຍຝຶກມາແມ່ນຕົນເອງມີຄວາມຖະນັດເຮັດໄດ້ດີແລ້ວ, ຄັ້ງຕໍ່ມາກໍ່ປະຕິບັດໄປຕາມແບບສະບັບທີ່ເຄີຍຝຶກມາແຕ່ກ່ອນນັ້ນອີກແລ້ວກໍ່ຄະນານາມວ່າຕົນມີຄວາມສຳນິສຳນານໃນເລື້ອງນັ້ນ. ນັ້ນຄືຄວາມເຂົ້າໃຈທີ່ຜິດພາດເພາະວ່າຄວາມຮັບຮູ້ຂອງສຳມະນາກອນທີ່ເຂົ້າຝຶກແຕ່ລະຄັ້ງ, ແຕ່ລະຄົນແຕກຕ່າງກັນໂດຍຂື້ນກັບລະດັບວິຊາສະເພາະ ແລະປະສົບ

ຊື່ສຽງລຽງນາມ

- ກະຕຸ້ນໃຫ້ສຳມະນາກອນໄດ້ເກີດຄວາມຮູ້ສຶກວ່າການຝຶກອົບຮົມທີ່ຈັດຂຶ້ນນີ້ແມ່ນເປັນຄວາມຕ້ອງການ ແລະປະໂຫຍດຂອງເຂົາເຈົ້າຫາກບໍ່ແມ່ນເປັນພຽງພາລະກິດຂອງທີມຄູຝຶກຝ່າຍດຽວ, ອາດດ້ວຍການສະເໜີຄວາມເປັນມາ ແລະຈຸດປະສົງການຝຶກໂດຍສືບຕໍ່ດ້ວຍການເວົ້າຈາອ້ອມຮອບໄປເຖິງພາລະກິດຂອງແຕ່ລະຝ່າຍ ແລະເຫດຜົນທີ່ຕ້ອງຮ່ວມກັນຝຶກ
- ຫຼີກເວັ້ນການສ້າງຄວາມລະແວງສົງໃສ, ການບີບບັງຄັບ, ຄວາມເຂົ້າໃຈຜິດລະວ່າງສຳມະນາກອນດ້ວຍກັນ ແລະລະຫວ່າງສຳມະນາກອນກັບຄູຝຶກ. ຕິຖອຍຄວາມຮູ້ສຶກທີ່ວ່າການເຂົ້າມາຮັບຝຶກເພາະເປັນພັນທະແລະເປັນພຽງພິທີການ.
- ໝັ່ນສັງເກດຄວາມອຶດອັດ, ລັກສະນະທ່າທາງ ແລະຄວາມສົນໃຈຂອງສຳມະນາກອນຕະລອດເວລາເພື່ອທີ່ຄູຝຶກຈະໄດ້ແກ້ໄຂສະຖານະການຖືກຕ້ອງ ແລະທັນການ_ກ່າວຄືບໍ່ໃຫ້ບັນຍາກາດການຝຶກເຄັ່ງຄຽດເກີນໄປ, ມີຜູ້ລຳຄານເບື່ອໜ່າຍ, ມີຜູ້ອາຍ ແລະມີຜູ້ຕື່ນເຕັ້ນຈົນເກີນໄປ. ຄູຝຶກຕ້ອງປັບປ່ຽນສະຖານະການໃຫ້ໄດ້ເມື່ອເກີດສິ່ງໃດນຶ່ງທີ່ກ່າວມານັ້ນຂຶ້ນ.
- ບັນຍາກາດໃນຊ່ວງພັກຜ່ອນ: ຄູຝຶກຄວນສັງເກດທ່າທີ, ທັດສະນະຄວາມສົນໃຈຂອງສຳມະນາກອນຕໍ່ສິ່ງທີ່ໄດ້ນຳສະເໜີຜ່ານໄປໃນຫ້ອງນັ້ນວ່າເປັນຢ່າງໃດ ອາດດ້ວຍການຮ່ວມໂອ້ລົມແບບບໍ່ເປັນທາງການພະຍາຍາມຊັກຖາມເພື່ອໃຫ້ໄດ້ຂໍ້ຄິດເຫັນດ້ວຍໃຈຈິງ ແຕ່ບໍ່ໃຫ້ເປັນການບີບບັງຄັບ



ຮົມຕ້ອງຮູ້ຂັ້ນຕອນວິທີການສ້າງຫຼັກສູດຢ່າງໜັກແໜ້ນໂດຍກຳໄດ້ວ່າໃນແຜນຝຶກທີ່ດີນຶ່ງໆຕ້ອງປະກອບມີ :

- ເລື້ອງຂອງການຝຶກ ?
- ຈຸດປະສົງລວມຂອງການຝຶກ ?
- ບັນດາຫົວບົດຝຶກມີອັນໃດແດ່ ? ພ້ອມທັງການອອກແບບພາກວິຊາ ແລະ ຕາຕະລາງຝຶກ
- ກຳນົດເວລາ ແລະສະຖານທີ່ຝຶກ ?
- ກຸ່ມເປົ້າໝາຍ ແລະທີມວິທະຍາກອນມີໃຜ /ເທົ່າໃດ ?
- ຂັ້ນຕອນ/ວິທີການຈັດຕັ້ງປະຕິບັດການຝຶກເປັນຢ່າງໃດ ?
- ງົບປະມານການຝຶກເທົ່າໃດ ?

ນັ້ນຄືຫຼັກສູດ / ແຜນລວມໃນການຝຶກອົບຮົມ ແຕ່ລະຄັ້ງທີ່ຕ້ອງມີ, ສ່ວນຫົວບົດຝຶກ ແຕ່ລະບົດໃນແຕ່ລະວັນຝຶກນັ້ນ ກໍ່ຕ້ອງມີການອອກແບບສະເພາະເປັນລາຍວິຊາໄປຊຶ່ງຮຽກກັນວ່າການອອກແບບພາກວິຊາ, ຊຶ່ງມີຄວາມສຳຄັນທີ່ສຸດສຳລັບການຝຶກໃນແຕ່ລະວັນ ເພາະສະພາບການຝຶກອາດມີການປ່ຽນແປງເກີດຂຶ້ນໄດ້ອັນມີຄວາມຈຳເປັນທີ່ຄູຝຶກອາດໄດ້ປ່ຽນແປງຮູບແບບແລະວິທີການຝຶກ ຫຼືແມ່ນແຕ່ເນື້ອໃນການຝຶກກໍ່ອາດມີການປ່ຽນແປງໄດ້ແລ້ວແຕ່ສະພາບການຮຽນຮູ້ ແລະຄວາມສົນໃຈຂອງສຳມະນາກອນ. ຢ່າງໃດກໍ່ດີສ່ວນປະກອບທີ່ສຳຄັນຂອງພາກວິຊາລວມມີ: ຊື່ເລື້ອງຝຶກ, ຫົວບົດຝຶກ, ຈຸດປະສົງສະເພາະຂອງບົດຝຶກ, ເນື້ອໃນບົດຝຶກ, ວິທີການຝຶກ,ສື່ ແລະ ອຸປະກອນທີ່ຈະໃຊ້ຝຶກ, ເວລາຝຶກ

ທີ່ກ່າວຂ້າງເທິງແມ່ນເປັນພຽງຂໍ້ຄິດເຫັນເພື່ອເປັນກອບຄວາມເຂົ້າໃຈເຖິງການຝຶກອົບຮົມ ຫາກບໍ່ແມ່ນການເຈາະຈົງວ່າອ່ານແລ້ວປະຕິບັດໄດ້ທັນທີ. ເພາະເວລາປະຕິບັດວຽກຕົວຈິງແມ່ນ ມີຈຸດປະສົງຄາດໝາຍສະເພາະ, ມີຫຼາຍອົງປະກອບ ແລະ ເງື່ອນໄຂຈຳເປັນທີ່ກ່ຽວຂ້ອງສຳພັນຊຶ່ງກັນ ແລະ ກັນໃນວຽກນີ່ງໆ.

ຕົວຢ່າງ: ການຝຶກອົບຮົມຊາວນາ, ດັ່ງທີ່ໜ່ວຍ CETDU ພະແນກວິຊາການຂອງກອງສົ່ງເສີມ ກປ ໄດ້ຈັດຕັ້ງປະຕິບັດມາແລ້ວມີເປົ້າໝາຍເພື່ອເຮັດ**ໃຫ້ເກີດການຈັດຕັ້ງປັບປຸງກຸ່ມຜູ້ຜະລິດ / ນຳໃຊ້ນ້ຳໃນເຂດທີ່ມີຊົນລະປະທານ, ໃຫ້ເກີດມີຜູ້ນຳ ແລະຄະນະບໍລິຫານງານກຸ່ມທີ່ເກັ່ງ, ມີວິຊາການບ້ານໃນກຸ່ມທີ່ເກັ່ງ / ດີ , ແລະມີໝາກຜົນການຜະລິດທີ່ຫຼາຍປະຊາຊົນສ່ວນຫຼວງຫຼາຍເພິງພໍໃຈ. ດ້ວຍເຫດນັ້ນຈຶ່ງໄດ້ກຳນົດຂະບວນການ ແລະຍຸດທະວິທີການປະຕິບັດຕົວຈິງດັ່ງລຸ່ມນີ້:**

## ຂະບວນການຝຶກອົບຮົມຊາວກະສິກອນທີ່ຕ້ອງປະຕິບັດ

ຄູຝຶກລະດັບສູນກາງລົງສຶກສາສົມທົບ ແລະປະເມີນສະພາບຄວາມຕ້ອງການຂອງເມືອງ ແລະກະກຽມຂັ້ນຕອນຂະບວນການ ເຄື່ອງມືການສົ່ງເສີມ

---

**RSA-- _ Rural System Assessment**
**TNA- _ Training Need Assessment**
**FT _ Farmer Training**
**PT _ Provincial Trainer**
**DT _ District Trainer**



- ບໍ່ຄວນແຍກຜູ້ຍິງຜູ້ຊາຍນັ່ງເປັນຝ່າຍເປັນກຸ່ມ

## 2.2. ການຄວບຄຸມບັນຍາກາດ

ບັນຍາກາດການຝຶກເປັນປັດໃຈສຳຄັນທີ່ເຮັດໃຫ້ເກີດການຮຽນຮູ້ຂອງສຳມະນາກອນ. ເພາະສະນັ້ນຄູຝຶກຕ້ອງມີເຕັກນິກໃນການຄວບຄຸມບັນຍາກາດການຝຶກອົບຮົມທີ່ດີຊຶ່ງປະກອບມີ:

- ບັນຍາກາດຊ່ວງກ່ອນເຂົ້າຫ້ອງຝຶກ: ຊ່ວງນີ້ເປັນຊ່ວງເຕົ້າໂຮມສຳມະນາກອນ ຫຼືລົງທະບຽນຕ່າງໆ ຊຶ່ງເປັນຊ່ວງທີ່ຄູຝຶກຕ້ອງໄດ້ສັງເກດບັນຍາກາດຢ່າງລະມັດລະວັງພໍສົມຄວນ. ເພາະບາງສຳມະນາກອນອາດມີຄວາມກັງວົນນຳຄອບຄົວເຮືອນຊານ, ອາລົມເສຍ, ອາດມີຄວາມເພີດເພີນເມື່ອໄດ້ພົບພໍ້ກັນອີກ, ມີຂໍ້ສົງໃສຕ່າງໆນາໆ. ສຳມະນາກອນອາດມີການລວມກຸ່ມສົນທະນາເປັນກຸ່ມຍ່ອຍຕາມອັດທະຍາໃສ. ຊ່ວງນີ້ຄູຝຶກຕ້ອງສັງເກດໃຫ້ຮູ້ສະພາບລວມຂອງສຳມະນາກອນຈາກສີໜ້າ, ຄວາມຕື່ນເຕັ້ນ, ໂສກເສົ້າ , ຈາກປະເດັນເລື້ອງສົນທະນາ ແລະສຳນຽງຄຳເວົ້າຕ່າງໆ ເພື່ອທີ່ໃນເວລາເລີ່ມເຂົ້າຫ້ອງຝຶກຈະໄດ້ແກ້ໄຂໃຫ້ສະຖານະການດີຂຶ້ນພ້ອມທີ່ຈະສຸມຈິດໃຈໃສ່ການສົນທະນາແລກປ່ຽນຄວາມຄິດເຫັນຢ່າງເປັນກັນເອງໄດ້.
- ໃນເວລາເຂົ້າຫ້ອງຝຶກແລ້ວ: ຄວນສ້າງບັນຍາກາດໃຫ້ເກີດການຮັບຮູ້ຊຶ່ງ ກັນ ແລະກັນ, ເຮັດໃຫ້ທຸກຄົນເປັນກັນເອງ, ຫາຍຂໍ້ສົງໃສຕ່າງໆນາໆກ່ອນຈະເລີ່ມເຂົ້າເນື້ອໃນຝຶກອາດດ້ວຍວິທີນຳສະເໜີຕົວຊຶ່ງກັນ ແລະກັນເພື່ອຮູ້ວ່າໃຜເປັນໃຜ, ມີໜ້າທີ່ຮັບຜິດຊອບຫຍັງພິເສດໃນຊຸມຊົນ ຫຼືໄດ້ຮູ້

ຝຶກອົບຮົມ. ແຕ່ສ່ວນລາຍລະອຽດທາງເຕັກນິກອັນສຳຄັນຕົ້ນຕໍທີ່ນັກຝຶກອົບຮົມຕ້ອງມີຂີດຄວາມສາມາດ ແລະ ຄວາມຖະນັດໃນການປະຕິບັດ**ເມື່ອເຂົ້າຫ້ອງຝຶກຕົວຈິງ**ເພື່ອໃຫ້ຊາວບ້ານ**ເກີດການຮຽນຮູ້ ແລະຢາກນຳເອົາໄປປະຕິບັດ**ນັ້ນນັກຝຶກອົບຮົມ ຫຼືຄູຝຶກຕ້ອງໄດ້ຝຶກຝົນຈິງຈັງໃນເລື່ອງທີ່ຈະໄດ້ກ່າວຕໍ່ລົງໄປນີ້ :

## 2. ເຕັກນິກພື້ນຖານສຳຄັນສຳລັບການຄວບຄຸມຫ້ອງຝຶກ

### 2.1. ການຈັດສະຖານທີ່ຝຶກອົບຮົມ

ຫ້ອງຝຶກອົບຮົມເປັນສ່ວນນຶ່ງທີ່ມີຜົນກະທົບ ໃນທາງລົບຕໍ່ການຮຽນຮູ້ຖ້າຫາກບໍ່ມີການຈັດການທີ່ເໝາະສົມ. ຫ້ອງຝຶກອົບຮົມຊາວນາໃນຊົນນະບົດສ່ວນໃຫຍ່ຈະເປັນຫ້ອງປະຊຸມຂອງປົກຄອງບ້ານ, ໂຮງຮຽນຂອງບ້ານ, ວັດ... ຫາກບໍ່ແມ່ນມີຫ້ອງຝຶກສະເພາະທີ່ມີອຸປະກອນຮັບໄຊ້ຄົບຖ້ວນເພາະສະນັ້ນ, ຄູຝຶກແຂວງ, ຄູຝຶກເມືອງຕ້ອງໄດ້ເອົາໃຈໃສ່ຄື:

- ຈັດບ່ອນນັ່ງຂອງສຳມະນາກອນ (ຊາວບ້ານ) ໃຫ້ເໝາະສົມນັ່ງສະບາຍບໍ່ແອະອັດ, ສາມາດສັງເກດເຫັນໜ້າຕາທຸກຄົນໄດ້ດີ, ບໍ່ຫ່າງໄກຈາກບ່ອນວິທະຍາກອນເກີນໄປ
- ມີສະພາບອາກາດຖ່າຍເທດີ ປາດສະຈາກກິ່ນ ແລະສຽງລົບກວນ, ສະອາດ
- ຖ້າຈັດການໄດ້ກໍ່ຄວນໃຫ້ອຸນະຫະພູມຢູ່ໃນລະດັບທີ່ທຸກຄົນຮູ້ສຶກສະບາຍ
- ທີ່ຕັ້ງຂອງອຸປະກອນການຝຶກ (ກະດານຂາວ, ແຜ່ນປ້າຍ, ບ່ອນຕິດເຈ້ຍຕ່າງໆຕ້ອງໃຫ້ທຸກຄົນເຫັນ ແລະອ່ານໄດ້ສະບາຍ, ບໍ່ໄກແລະໃກ້ເກີນໄປ)






ຢາກໃຫ້ເປົ້າໝາຍທີ່ກ່າວມານັ້ນເກີດມີຜົນທາງຮູບປະທຳມີຄວາມ

ຈຳເປັນທີ່ນັກຝຶກອົບຮົມ ຫຼືຄູຝຶກທຸກລະດັບຕ້ອງໄດ້ເຂົ້າໃຈ ແລະປະຕິບັດໄດ້ແທ້ໆໃນເລື້ອງຂະບວນການຝຶກຊາວກະສິກອນອັນເປັນກຸ່ມເປົ້າໝາຍສຸດທ້າຍຂອງພວກເຮົາ. ເພາະການພັດທະນາ ຫຼືການປັບປຸງປ່ຽນແປງຕົວຈິງຈະເກີດຂື້ນໄດ້ນັ້ນ ຕ້ອງແມ່ນປະຊາຊົນຜູ້ຜະລິດເປັນຜູ້ສ້າງ / ຜູ້ເຮັດ, ພວກເຮົາພະນັກງານທີ່ນອນໃນກົນໄກການຈັດຕັ້ງລັດ ແມ່ນມີບົດບາດໜ້າທີ່ເປັນພຽງຜູ້ລະດົມຂົນຂວາຍ, ໃຫ້ຄວາມຮູ້, ໃຫ້ຄຳປຶກສາ ແນະນຳ ແລະໃຫ້ບໍລິການທາງວິຊາການແກ່ປະຊາຊົນ, ຫາກບໍ່ແມ່ນມີໜ້າທີ່ໄປເຮັດແທນປະຊາຊົນ. ດ້ວຍເຫດນັ້ນ, ກອບຄວາມຄິດທີ່ສຳຄັນໃນການຈັດຝຶກອົບຮົມ ແລະສົ່ງເສີມຕ້ອງເລີ່ມຈາກຂໍ້ສົມມຸດຕິຖານທີ່ວ່າ "ການຝຶກອົບຮົມຊາວກະສິກອນຈະເກີດປະສິດຕິພາບໄດ້ນັ້ນ ກໍ່ຕໍ່ເມື່ອ"

- ການຝຶກນັ້ນມີຄວາມສອດຄ່ອງກັບຄວາມຕ້ອງການຂອງຊາວກະສິກອນກຸ່ມເປົ້າໝາຍ
- ການຝຶກນັ້ນມີຄວາມສອດຄ່ອງກັບລະດູການຜະລິດຕົວຈິງຂອງຊາວກະສິກອນ
- ເນື້ອໃນການຝຶກຕ້ອງສອດຄ່ອງກັບລະດັບຄວາມສາມາດ ໃນການຮຽນຮູ້ຂອງກຸ່ມເປົ້າໝາຍ
- ຝຶກແລ້ວຕ້ອງໃຫ້ໄດ້ມີການນຳໄປປະຕິບັດຈິງໃນບ່ອນຜະລິດໂລດ
- ຝຶກແລ້ວຕ້ອງໄດ້ມີການຕິດຕາມຊຸກຍູ້ / ແນະນຳຈົນໃຫ້ເຫັນຜົນການປະຕິບັດ
- ມີການຕີລາຄາຖອດຖອນບົດຮຽນຮ່ວມກັນທຸກຝ່າຍທີ່ກ່ຽວຂ້ອງ
- ຜູ້ຝຶກ / ສົ່ງເສີມຕ້ອງມີຄວາມໝັ້ນໃຈ

ເພື່ອຕອບສະໜອງໃຫ້ການຝຶກ ເກີດປະສິດຕິພາບຈິງໆນັ້ນ, ຄູຝຶກທຸກຄົນຕ້ອງໄດ້ເຮັດໜ້າທີ່ໃນການຈັດຕັ້ງປະຕິບັດວຽກງານການຝຶກການສົ່ງເສີມດັ່ງລຸ່ມນີ້ :

- ກຳແໜົມເປົ້າໝາຍລວມຂອງກິດຈະກຳການສົ່ງເສີມ ຫຼື ພັດທະນານັ້ນໆ
- ສຶກສາ, ຮັບຮູ້ຄວາມຕ້ອງການໃນການຝຶກ ແລະແນວຄິດຈິດໃຈຂອງປະຊາຊົນຜູ້ຜະລິດ
- ກຳນົດບຸກຄົນເປົ້າໝາຍເພື່ອໃຫ້ການຝຶກອົບຮົມຢ່າງຖືກຕ້ອງເຈາະຈິງຕາມຄວາມຕ້ອງການທີ່ມີ
- ວາງແຜນຝຶກແຕ່ລະເລື້ອງໃຫ້ສອດຄ່ອງກັບຄວາມຕ້ອງການຂອງແຕ່ລະກຸ່ມເປົ້າໝາຍ
- ຈັດຕັ້ງການຝຶກໃຫ້ແຕ່ລະກຸ່ມເປົ້າໝາຍຢ່າງສອດຄ່ອງກັບໄລຍະເວລາໃນການນຳເອົາບົດຮຽນໄປປະຕິບັດເຂົ້າໃນການຜະລິດຕົວຈິງໂລດ
- ປະສານງານ ແລະໃຫ້ການສະໜັບສະໜູນເງື່ອນໄຂ / ປັດໃຈຕ່າງໆ (ກໍລະນີຈຳເປັນ ແລະຈັດຫາໄດ້)
- ຕິດຕາມຊຸກຍູ້ການປະຕິບັດຕົວຈິງຂອງຊາວບ້ານເປັນປະຈຳເພື່ອໃຫ້ຄຳແນະນຳເພີ່ມເຕີມກັບທີ່ຢ່າງທັນການແນໃສ່ໃຫ້ຊາວບ້ານເຮັດໄດ້ດ້ວຍຕົນເອງແທ້ໆໃນທີ່ສຸດຈຶ່ງຈະເພິ່ງພາຕົນເອງໄດ້
- ຮ່ວມກັບຊາວບ້ານປະເມີນຜົນການນຳເອົາຄວາມຮູ້ໄປໃຊ້ນັ້ນໄດ້ຜົນຢ່າງໃດ, ມີຂອດໃດທີ່ຄວນແກ້ໄຂ ແລະສິ່ງໃດກ່ຽວຂ້ອງກັບໃຜຕ້ອງແກ້ແລ້ວວາງແຜນປະຕິບັດໃນລະດູການຕໍ່ໄປ.

ທີ່ກ່າວມານັ້ນຄືພາບລວມ ຂອງການຈັດຕັ້ງປະຕິບັດຂະບວນການ